# ມໍລະດົກວັນນະຄະດີເພື່ອຊີວິດ ແລະ ມິດຕະພາບ 5

## ຈັນທະພິລິດ ຈຽມສີສຸລາດ

ປະເທດລາວປະຈຸບັນ ມີປະຊາກອນ 5,5 ລ້ານຄົນ ປະກອບດ້ວຍ 49 ຊົນເຜົ່າ. ຄວາມຫລາກຫລາຍທາງດ້ານເຜົ່າພັນນີ້ ເປັນແຫລ່ງແຫ່ງຄວາມອຸດົມສົມບູນ ແລະ ຄວາມແຕກຕ່າງທາງດ້ານວັດທະນະທຳ ອັນເປັນສິ່ງທີ່ໜ້າພູມໃຈຂອງຊົນຊາດລາວ. ວັນນະກຳພື້ນເມືອງ ທີ່ກ່າວເຖິງຄວາມເປັນມາຂອງເຜົ່າພັນໃນລາວນີ້ ເປັນທີ່ຮູ້ກັນຢ່າງທົ່ວເຖິງ ຄືເລື່ອງນ້ຳເຕົ້າປູມ. ໃນປະຫວັດສາດຫລາຍພັນປີ ບັນພະບຸລຸດລາວ ແລະ ປະຊາຊົນລາວບັນດາເຜົ່າ ເປັນຜູ້ດຸໝັ່ນຂະຫຍັນພຽນ ມີຫົວຄິດປະດິດສ້າງ ປະກອບສ່ວນເຂົ້າໃນການສ້າງມໍລະດົກວັດທະນະທຳຂອງໂລກ ໃຫ້ອຸດົມຮັ່ງມີຂຶ້ນຢ່າງສົມກຽດ. ນອກຈາກໂບຮານວັດຖຸທີ່ລືຊື່ ຄື: ໄຫຫີນເມືອງພວນ, ວັດພູຈຳປາສັກ, ພະທາດຫລວງ ແລະ ວັດວາອາຮາມທີ່ແຂວງຫລວງພະບາງ ແລະແຂວງອື່ນໆແລ້ວ ຍັງມີມໍລະດົກດ້ານວັນນະກຳໃຫຍ່ໆ ຄື: ທ້າວຮຸ່ງທ້າວເຈືອງ, ສັງສິນໄຊ, ສຽວສະຫວາດ ... ດ້ານສິລະປະຫັດຖະກຳ, ສິລະປະດົນຕີ, ສິລະປະການສະແດງ, ເຄື່ອງນຸ່ງຫົ່ມ ຜ້າແພ ແລະ ອາຫານການກິນດື່ມ ທີ່ເປັນຕຳນານມາຮອດເທົ້າທຸກວັນນີ້

### ວັນນະຄະດີບູຮານ ກັບວັດທະນະທຳພື້ນບ້ານ

ວັນນະຄະດີບູຮານລາວ ເປັນຂະແໜງນຶ່ງທີ່ສຳຄັນ ຂອງວັດທະນະທຳພື້ນບ້ານຂອງລາວ ໄດ້ເລົ່າສືບກັນມາຈົນກາຍເປັນມໍລະດົກຕົກທອດມາຮອດປະຈຸບັນ ມີຢູ່ຢ່າງຫລາກຫລາຍ ອາດເວົ້າໄດ້ວ່າ ວັນນະກຳພື້ນບ້ານເປັນພາກສ່ວນທີ່ສຳຄັນທີ່ສຸດ ຂອງວັດທະນະທຳພື້ນເມືອງລາວ ວັນນະຄະດີພື້ນບ້ານໂຮມເອົາໝົດທຸກອັນຂອງວັດທະນະທຳທີ່ເລົ່າສືບກັນດ້ວຍປາກ ເວົ້າໂດຍລວມກໍມີ ເທບນິຍາຍ, ຕຳນານ, ນິທານ, ສຸພາສິດ, ຄຳທວາຍ, ນິທານກ້ອມ-ນິທານຊວນຫົວ, ກອນຂັບ-ກອນລຳ ຈາກທ້ອງຖິ່ນຕ່າງໆ

ວັນນະກຳພື້ນບ້ານ ເປັນມໍລະດົກທີ່ມີຄຸນຄ່າສູງ ເພາະມັນສ່ອງແສງໃຫ້ເຫັນກົກເຫງົ້າຂອງວັດທະນະທຳປະຊາຊົນ. ວັນນະກຳປາກເປົ່າເປັນຮູບການສະແດງອອກຕາມທຳມະຊາດຂອງຄົນ. ມັນສາມາດບັນທຶກ ແລະ ພັນລະນາວັດທະນະທຳນັ້ນໆ ແລະ ສ່ອງແສງໃຫ້ເຫັນເຖິງແນວຄິດຈິດໃຈອັນແທ້ຈິງຂອງປະຊາຊົນ. ສະນັ້ນ ວັນນະຄະດີພື້ນເມືອງ ຫລື ວັນນະກຳປາກເປົ່າຈຶ່ງແມ່ນວັນນະຄະດີບູຮານດັ້ງເດີມຂອງປະຊາ

ຊົນລາວ ແລະ ເປັນພື້ນຖານໃຫ້ແກ່ວັນນະກໍາທີ່ຂຽນ ຫລືບັນທຶກລົງດ້ວຍຮູບແຕ້ມ ແລະຕົວໜັງສືໃນສະໄໝຕໍ່ມາ ຫລືໃນປະຈຸບັນນີ້ ເພິ່ນສາມາດບັນທຶກວັນນະຄະດີບູຮານໄດ້ດ້ວຍການສ້າງເປັນຮູບເງົາ ຟິມ ວີດີໂອ ແລະສື່ປະເພດຕ່າງໆ

ວັນນະຄະດີພື້ນເມືອງລາວທີ່ໄດ້ເລົ່າ, ໄດ້ອ່ານ, ຮ້ອງ-ລໍາ, ເທດ ສູ່ກັນຟັງ ກໍໄດ້ຮັບການປ່ຽນແປງຈາກຜູ້ເລົ່າໃໝ່ ອັນເຮັດໃຫ້ສິລະປະການເລົ່າເລື່ອງ ມີການຂະຫຍາຍຕົວ. ນັກເລົ່າ ຫລື ນັກແຕ່ງວັນນະຄະດີປາກເປົ່າ ບໍ່ໄດ້ຖືລິຂະສິດໃດໆ ຕໍ່ຜົນງານທີ່ປະດິດໄວ້. ສະນັ້ນ ຈຶ່ງເຫັນວ່າ ທຸກເລື່ອງເລົ່າ ບໍ່ມີຊື່ຜູ້ແຕ່ງເລີຍ

ວັນນະຄະດີປາກເປົ່າຂອງປະຊາຊົນລາວນີ້ ບໍ່ໄດ້ພຽງແຕ່ເລົ່າສູ່ກັນຟັງເທົ່ານັ້ນ, ຍັງມີຫລາຍໆເລື່ອງທີ່ປະຊາຊົນລາວໃນແຕ່ລະຍຸກ ແຕ່ລະສະໄໝ ປະດິດແຕ່ງຂຶ້ນເປັນວັນນະຄະດີ ເພື່ອເລົ່າໃຫ້ກັນຟັງຕໍ່ໆໄປ

## ຕົວໜັງສື ພາສາ ແລະ ວັນນະຄະດີຂຽນ

ເມື່ອເລີ່ມມີຕົວໜັງສື ໂດຍສະເພາະແຕ່ອັດຕະວັດທີ XIV ເປັນຕົ້ນມາ ພະສົງລາວ, ນັກປາດ ແລະ ປັນຍາຊົນລາວ ໄດ້ເລີ່ມເຕົ້າໂຮມ ແລະຂຽນວັນນະກໍາພື້ນບ້ານໃສ່ໃບລານໄວ້, ບາງທ້ອງຖິ່ນກໍ່ຂຽນໃສ່ພັບສາ. ແຕ່ນັ້ນມາຄວາມຊົງຈໍາຂອງຊາດລາວ ວັດທະນະທໍາພື້ນບ້ານຂອງລາວ ສ່ວນສໍາຄັນກໍໄດ້ຖືກບັນທຶກໄວ້ຢ່າງເປັນລະບົບ. ນອກຈາກວັນນະກໍາພື້ນບ້ານແລ້ວ ເພິ່ນຍັງໄດ້ສ້າງວັນນະກໍານັກປາດ, ວັນນະກໍາທາງການ, ວັນນະກໍາທາງການເມືອງ ແລະ ວັນນະຄະດີຂອງວິຊາສະເພາະຂະແໜງຕ່າງໆ ໄວ້ໃຫ້ພວກເຮົາຢ່າງໜ້າຊື່ນຊົມ, ວັນນະກໍາໃຫຍ່ໆຂອງລາວບູຮານ ແມ່ນໄດ້ຂຽນຂຶ້ນໃນສະໄໝ ອານາຈັກລາວລ້ານຊ້າງຮຸ່ງເຮືອງ ໃນສັດຕະວັດທີ XV - XVII

ໃນແຕ່ລະຍຸກ ແຕ່ລະສະໄໝ ຄົນລາວໄດ້ສ້າງວັນນະກໍາ ແລະ ຜົນງານຍອດຢ້ຽມທາງດ້ານວັນນະຄະດີໄວ້ຫລາຍສົມຄວນ ເຊັ່ນ: ສານລຶບພະສູນ, ກາບເມືອງພວນ, ທ້າວເຫລົາຄໍາ ...

ຕໍ່ມາກໍ່ມີວັນນະຄະດີປະຕິວັດຕ້ານຜູ້ຍຶດຄອງ ແລະ ຮຸກຮານ ຄື: ສີນ້ອຍ, ສອງເອື້ອຍນ້ອງ, ພາຍຸຊີວິດຊຶ່ງເປັນເລື່ອງຍາວ. ສອງເລື່ອງສຸດທ້າຍນີ້ ລ້ວນແຕ່ໄດ້ຮັບລາງວັນຊີໄຣອັນຊົງກຽດ, ເລື່ອງສັ້ນຫລາຍເລື່ອງກໍ່ມີຄວາມໂດດເດັ່ນຈັບໃຈ ຄື: ຟອງເດືອນເກົ້າ, ຄ້າງຄືນໃນປ່າເລິກ ...

ໃນສະໄໝສາທາລະນະລັດ ເກືອບ 30 ປີມານີ້ ໄດ້ມີຜົນງານດີໆຫລາຍສະບັບ ທີ່ໄດ້ຮັບຄວາມນິຍົມ ຄື: ລາວດວງເດືອນ, ຕາເວັນຂຶ້ນທີ່ດອນນາງ, ພົກແຜ່ນດິນປີ້ນແຜ່ນຟ້າ ຢາກເຫັນໜ້າໃຫ້ເບິ່ງຫລັງ, ເພື່ອຮັກເພື່ອນາງ, ກອງພັນທີສອງ, ບົວແດງ ແລະອື່ນໆ. ເນື້ອໃນຂອງວັນນະຄະດີເວລານີ້ ສ່ວນໃຫຍ່ ກໍ່ຍັງແມ່ນການຕໍ່ສູ້ກູ້ຊາດ ການຕໍ່ສູ້ເພື່ອຄວາມເປັນທຳ, ເພື່ອສິ່ງແວດລ້ອມ ແລະ ຊີວິດທີ່ມີຄວາມໝາຍ ແລະ ຄຸນນະພາບທີ່ດີຂຶ້ນ

ກອງພັນທີສອງ ແລະ ບົວແດງ ໄດ້ນຳມາສ້າງເປັນຮູບເງົາ ຊຶ່ງກໍ່ສາຍແລ້ວສາຍຕື່ມ ເພາະມີແຕ່ສອງເລື່ອງເທົ່ານັ້ນ

ວັນນະກຳຂຽນໃນຫລາຍສະຕະວັດຜ່ານມາ ໄດ້ມີອິດທິພົນເຮັດໃຫ້ການຂຽນໜັງສືລາວ ມີການພັດທະນາ ແລະ ເຮັດໃຫ້ພາສາລາວອຸດົມຮັ່ງມີຂຶ້ນເລື້ອຍໆ. ມໍລະດົກວັນນະຄະດີລາວ ໄດ້ສ່ອງແສງໃຫ້ເຫັນເຖິງປະຫວັດສາດ, ວິລະກຳອັນລ້ຳເລີດ, ສິລະປະວັດທະນະທຳ, ຊີວິດ ແລະ ຈິດໃຈຂອງຊາດລາວ. ສະນັ້ນພວກເຮົາກໍ່ພໍເວົ້າໄດ້ວ່າ ຢາກຮູ້ຈັກຢາກເຂົ້າໃຈແນວຄິດຈິດໃຈ ການປະພຶດປະຕິບັດຂອງປະຊາຊົນລາວ ກໍ່ຕ້ອງຮຽນຮູ້ວັນນະກຳ ແລະ ວັດທະນະທຳພື້ນເມືອງຂອງລາວເຜົ່າຕ່າງໆ

## ວັນນະຄະດີບູຮານລາວ ແຫລ່ງຄຸນຄ່າສຳລັບຊີວິດ

ໃນຍຸກທີ່ໂລກພວມປ່ຽນແປງ ຄົນສ່ວນນຶ່ງເຫັນແຕ່ຄວາມສະດວກທາງດ້ານວັດຖຸເງິນຄຳ ເປັນສຳຄັນການນຳໃຊ້ປັດຊະຍາ ແລະ ຄຳສອນຂອງຄົນລາວບູຮານຈາກສຸພາສິດ, ນິທານ, ພຸດທະຈະລິຍາ ຈະຊ່ອຍໃຫ້ຕົນເອງເປັນທີ່ເພິ່ງຕົນເອງ ແລະເປັນປະໂຫຍດແກ່ສ່ວນລວມ ແລະປະເທດຊາດໄດ້. ວັນນະຄະດີລາວ ເປັນຄັງສາງແຫ່ງຄຸນນະທຳ ແລະ ຄຸນຄ່າອັນສູງສົ່ງຂອງຊີວິດ ແລະ ການຢູ່ຮ່ວມກັນ

ເບິ່ງແຕ່ເພງກ່ອມລູກ, ກາບກອນ ເພງ ແລະ ການຫລິ້ນຂອງເດັກ, ເພງລາວເດີມ, ເພງລາວສະໄໝ ແລະ ກອນຂັບກອນລຳ ລ້ວນແຕ່ປະກອບສ່ວນ ເຮັດໃຫ້ຊີວິດມີຄຸນນະພາບ, ມີມິດຕະພາບ. ຖ້າບຸນໃດມີຂັບລຳ, ມີເພງ, ມີແຄນ ກໍ່ຄົງຈະບໍ່ຍອມເລີກງ່າຍ. ສະນັ້ນ ພວກເຮົານັກຮົບວັດທະນະທຳ ເມື່ອເດີນທາງຮ່ວມກັນກໍ່ມັກມີເລື່ອງມ່ວນໆ, ເລື່ອງຕະຫລົກຊວນຫົວ ເລົ່າໃຫ້ກັນຟັງສຸດທາງ, ແຕ່ລະຄົນເປັນທັງຜູ້ຟັງ, ຜູ້ເຮັດ, ຜູ້ສ້າງສັນ. ອັນນີ້ແມ່ນການອະນຸລັກແບບມີສ່ວນຮ່ວມ

ສິ່ງນຶ່ງທີ່ສຳຄັນທີ່ສຸດ ທີ່ໄດ້ຈາກການປົກປັກຮັກສາໜັງສືໃບລານລາວ ກໍແມ່ນການສ້າງຄວາມສຳຄັນ ແລະ ຄວາມເຫລື້ອມໃສສັດທາເພີ່ມເຕີມໃຫ້ແກ່ສາສະໜາພຸດໃນລາວ ອັນນີ້ສຳຄັນແທ້ ເພາະສາສະໜາພຸດ ເປັນພື້ນຖານຂອງຊີວິດຈິດໃຈ ແລະ ວັດທະນະທຳຂອງຄົນລາວສ່ວນຫລາຍ ມາເປັນເວລາຍາວນານແລ້ວ ຈົນກາຍເປັນເອກະລັກແຫ່ງຊາດ

## ໜັງສືໃບລານ ມໍລະດົກ ແລະ ມິດຕະພາບຕົວແບບ.

ໜັງສືໃບລານທັງໝົດ ທີ່ໄດ້ຮັບການສຳຫລວດ ແລະ ຂຶ້ນທະບຽນ 360.000 ຜູກນັ້ນ ຄົງເປັນແຕ່ພຽງສ່ວນນຶ່ງ ຂອງວັນນະຄະດີຂຽນ ທີ່ຊາດລາວບັນດາເຜົ່າໄດ້ສ້າງໄວ້. ສ່ວນນຶ່ງກໍ່ອາດສູນເສຍໄປກັບການເວລາ, ຖືກທຳລາຍໂດຍໄພທຳມະຊາດ, ປວກ, ໜູ, ອັກຄີໄພ, ເສິກສົງຄາມ ແລະ ຄວາມເຊື່ອຂອງຄົນເອງ. ສ່ວນນຶ່ງກໍຄົງຕົກຢູ່ນຳບຸກຄົນ ຫລືການຈັດຕັ້ງແຫ່ງອື່ນ

ນອກຈາກລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ທີ່ໄດ້ປົກປັກຮັກສາ ແລະ ເສີມຂະຫຍາຍໜັງສືຜູກໃບລານຂອງຕົນເອງແລ້ວ ນັກປາດ ແລະ ລັດຖະບານຂອງຫລາຍປະເທດ ແລະ ອົງການຈັດຕັ້ງສາກົນ ກໍໄດ້ໃຫ້ຄວາມສຳຄັນແກ່ມໍລະດົກວັນນະຄະດີຂອງລາວ ຄື ສະຖາບັນຕາເວັນອອກໄກຂອງຝຣັ່ງ, ມູນນິທິໂຕໂຢຕາຂອງຍີ່ປຸ່ນ, ມະຫາວິທະຍາໄລຊຽງໃໝ່ ແລະລັດຖະບານເຢີຣະມັນ ຊຶ່ງມີທ່ານສາດສະດາຈານ ດຣ. ຮາຣັນ ຮຸນດິອຸສ ເປັນຜູ້ປະສານງານ ເຮັດໃຫ້ວຽກງານການປົກປັກຮັກສາໜັງສືໃບລານລາວ ກ້າວສູ່ຜົນສຳເລັດ ດັ່ງພວກເຮົາເຫັນໃນປັດຈຸບັນນີ້

ຜົນສຳເລັດດັ່ງກ່າວມີຂຶ້ນ ສິ່ງສຳຄັນ ກໍ່ເພາະມີແນວທາງນະໂຍບາຍອັນຖືກຕ້ອງ ທາງດ້ານການເມືອງ, ການທູດ ແລະ ການຮ່ວມມືທາງດ້ານວັດທະນະທຳຂອງພັກ ແລະ ລັດຖະບານແຫ່ງ ສ.ປ.ປ. ລາວ. ພ້ອມດຽວກັນ ກໍຍ້ອນມີນັກວິຊາການລາວ ທີ່ມີຄວາມຮູ້ຄວາມສາມາດ ແລະ ຄວາມເສຍສະຫລະ ແລະ ຄວາມຕັດສິນໃຈໃນການດຳເນີນວຽກງານ ເປັນເວລາໄດ້ສິບກວ່າປີແລ້ວ ຄື ທ່ານນາງ ດາລາ ກັນລະຍາ, ທ່ານນາງກົງເດືອນ ເນດຕະວົງ, ທ່ານອາຈານ ບຸນຍົກ ແສນສຸນທອນ ພ້ອມດ້ວຍທີມງານ

ໂຄງການປົກປັກຮັກສາໜັງສືໃບລານລາວ ໄດ້ຮັບກຽດຍົກຍ້ອງໂດຍອົງການ UNESCO ໃຫ້ເປັນໂຄງການຕົວຢ່າງ ຂອງທົດສະວັດໂລກ ເພື່ອການພັດທະນາວັດທະນະທຳ ໃນປີ 1995, ຕໍ່ມາກໍໄດ້ຮັບກຽດຖືກເລືອກໃຫ້ເປັນ ໂຄງການດີເດັ່ນດ້ວຍການໄດ້ຮັບຫລຽນຄຳ ທີ່ງານສະແດງສາກົນທີ່ ແຮນໂນເວີ ເຢີຣະມັນ

ປີ 2000. ດັ່ງນັ້ນ ພວກເຮົາກໍ່ສາມາດເວົ້າໄດ້ວ່າ ມໍລະດົກໜັງສືໃບລານລາວ ໄດ້ຄ່ອຍໆກາຍເປັນມໍລະດົກວັດທະນະທຳຂອງໂລກ ໄປໃນຕົວແລ້ວ. ທັງນີ້ກໍ່ຍ້ອນຄວາມຕັ້ງໜ້າບຸກບືນ ຂອງປະຊາຊົນລາວທັງຊາດແຕ່ເໜືອຕະຫລອດໃຕ້ ແລະ ການສະໜັບສະໜູນຊ່ວຍເຫລືອທາງດ້ານວິຊາການ, ທຶນຮອນຈາກບັນດາເພື່ອນມິດ ແລະ ລັດຖະບານປະເທດຕ່າງໆ

## ບາງຍຸດທະສາດສຳລັບອະນາຄົດ

ຜົນສຳເລັດຂອງໂຄງການປົກປັກຮັກສາໜັງສືໃບລານລາວ ມາຮອດປັດຈຸບັນ ເກີດຂຶ້ນໄດ້ດ້ວຍປັດໄຈ ພາຍໃນ ແລະ ປັດໄຈພາຍນອກ. ລັດຖະບານ ແລະ ປະຊາຊົນລາວບໍ່ໄດ້ລົດລະ ໃຫ້ຄວາມສຳຄັນແກ່ມໍລະດົກອັນລ້ຳຄ່ານີ້ ຍັງມີຫລາຍວຽກທີ່ຈະຕ້ອງສືບຕໍ່ດຳເນີນ ເພື່ອເຮັດໃຫ້ຄຸນຄ່າຂອງໜັງສືໃບລານທີ່ເປັນຄັງສາງວັນນະຄະດີບູຮານລາວ ໄດ້ຮັບການອະນຸລັກ ແລະ ພັດທະນາ ເພື່ອປະໂຫຍດຂອງການສຶກສາຄົ້ນຄວ້າ, ການຮຽນຮູ້ ແລະ ແລກປ່ຽນວັດທະນະທຳກັບນາໆຊາດ

ເພື່ອບັນລຸເປົ້າໝາຍໃຫ້ໄດ້ ມັນຮຽກຮ້ອງໃຫ້ມີການຮ່ວມມືຈາກທຸກຄົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງທັງຈາກພາຍໃນ ແລະ ຕ່າງປະເທດ

ວຽກງານການວິໄຈ, ການສຶກສາສັງລວມ, ການປະລິວັດ, ການຄົ້ນຄວ້າໃນແງ່ມຸມຕ່າງໆ ໂດຍໃຊ້ໜັງສືໃບລານເປັນແຫລ່ງຂໍ້ມູນຂ່າວສານ ຍັງເປີດປະຕູໄວ້ລໍຖ້າຄອຍຕ້ອນຮັບ

ການສ້າງຕຳລາ, ຄູ່ມື, ປະທານຸກົມຄຳສັບລາວບູຮານ ເພື່ອອ່ານວັນນະຄະດີພື້ນເມືອງລາວ ກໍ່ເປັນສິ່ງທີ່ຈຳເປັນ ແລະ ຕ້ອງການ

ບຸກຄະລາກອນ ແລະ ການຈັດຕັ້ງກ່ຽວກັບການປົກປັກຮັກສາໜັງສືເກົ່າແກ່ຂອງລາວນີ້ ກໍຕ້ອງໄດ້ຮັບການຍົກລະດັບໃຫ້ສູງຂຶ້ນ ທັງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ

ໃນລະດັບອົງເຂດ ກໍ່ຕ້ອງໃຫ້ມີການພົວພັນແລກປ່ຽນຂໍ້ມູນຂ່າວສານ ນັກວິຊາການ ແລະຜູ້ຊ່ຽວຊານກຳກັບ ເພື່ອໃຫ້ໜັງສືເກົ່າແກ່ມີເຄືອຂ່າຍເຊື່ອມໂຍງກັນ

ສຸດທ້າຍນີ້ ຂ້າພະເຈົ້າເຫັນສົມຄວນວ່າ **ຢາກສະເໜີເອົາ ໜັງສືໃບລານລາວ ຈົດເຂົ້າເປັນມໍລະດົກວັດທະນະທຳທາງວັດຖຸຂອງໂລກ.**